ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຜນການ ແລະ ການລົງທຶນ
ຫ້ອງການ

ເລກທີ 569 /ຫກ3
ນະຄອນຫຼວງວຽງຈັນ, ວັນທີ 03 ມີນາ 2025

## ໜັງສືເຊີນເຂົ້າຮ່ວມແຂ່ງຂັນປະມູນ

ກະຊວງແຜນການ ແລະ ການລົງທຶນ ໄດ້ຮັບອະນຸມັດງົບປະມານຂອງລັດ ປະຈໍາປີ 2025 ເພື່ອດໍາເນີນໂຄງການ ປັບປຸງ, ສ້ອມແປງ ທາສີພາຍນອກ ແລະ ປັບປຸງ, ສ້ອມແປງ ລະບົບໄຟຟ້າພາຍໃນຕຶກສໍານັກງານ ຂອງກະຊວງແຜນການ ແລະ ການລົງທຶນ. ສະນັ້ນ, ຫ້ອງການກະຊວງແຜນການ ແລະການລົງທຶນ ຈິ່ງຂໍເຊີນບໍລິສັດຂອງທ່ານ ເພື່ອເຂົ້າຮ່ວມປະມູນ ໂຄງການດັ່ງກ່າວ, ຊຶ່ງມີລາຍລະອຽດດັ່ງນີ້:

1. ຫ້ອງການກະຊວງແຜນການ ແລະ ການລົງທຶນ ຂໍແຈ້ງເຊີນບັນດາບໍລິສັດ ທີ່ມີຄວາມສົນໃຈ ແລະ ມີເງື່ອນໄຂຄົບຖ້ວນ ເຂົ້າຍື່ນຊອງປະມູນ.
2. ການປະມູນຈະດໍາເນີນຕາມຂັ້ນຕອນ ຂອງລະບຽບການປະມູນທຸກປະການ, ທີ່ໄດ້ລະບຸໄວ້ໃນຄໍາແນະນໍາ ກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
3. ການປະມູນນີ້ ແມ່ນເປີດກ້ວາງໃຫ້ທຸກໆບໍລິສັດ, ຫ້າງ/ຮ້ານ ຂອງນິຕິບຸກຄົນພາຍໃນ ທີ່ດໍາເນີນທຸລະກິດຢູ່ນະຄອນຫຼວງວຽງຈັນ, ມີໃບທະບຽນວິສາຫະກິດຂະແໜງການທີ່ກ່ຽວຂ້ອງ, ມີເລກປະຈໍາຕົວເສຍອາກອນ ແລະ ໃບຢັ້ງຢືນການປະຕິບັດພັນທະພາສີ, ອາກອນ ຖືກຕ້ອງຕາມກົດໝາຍ.
4. ບໍລິສັດ, ຫ້າງ/ຮ້ານ ທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນຊື້ເອກະສານປະມູນຄົບຊຸດໄດ້ທີ່ ພະແນກບໍລິຫານ ແລະ ພິທີການ ຫ້ອງການ ກະຊວງແຜນການ ແລະ ການລົງທຶນ (ໂທລະສັບ: **856-21 216562, 020 2999 1160**) ສໍານັກງານຕັ້ງຢູ່ຖະໜົນສຸພານຸວົງ, ບ້ານສີຖານເໜືອ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ ໃນໂມງລັດຖະການ 8:00-12:00 ໂມງ ແລະ13:30-16:00 ໂມງ, ເລີ່ມຂາຍຊອງປະມູນ ແຕ່ວັນທີ 13 ມີນາ 2025 ເປັນຕົ້ນໄປ ຮອດວັນທີ 27 ມີນາ 2025 ລາຄາຊອງປະມູນ ຊອງລະ 1,000,000 ກີບ (ໜຶ່ງລ້ານກີບຖ້ວນ) ຈໍານວນເງິນດັ່ງກ່າວນີ້ ແມ່ນຈະບໍ່ໄດ້ສົ່ງຄືນ.
5. ກໍານົດສົ່ງຊອງປະມູນ ຕ້ອງສົ່ງໃຫ້ ພະແນກບໍລິຫານ ແລະ ພິທີການ ຫ້ອງການກະຊວງແຜນການ ແລະ ການລົງທຶນ ກ່ອນເວລາ **13:00 ໂມງ** ຂອງວັນທີ 10 ເມສາ 2025. ການເປີດຊອງປະມູນເວລາ **14:00 ໂມງ** ຂອງວັນທີ 10 ເມສາ 2023, ທີ່ຫ້ອງປະຊຸມທັນສະໄໝ ຕຶກ A ກະຊວງ ຜທ.
6. ທ່ານສາມາດຕິດຕໍ່ພົວພັນເພື່ອກວດເບິ່ງ ສະຖານທີ່ຕົວຈິງກັບເຈົ້າຂອງໂຄງການໄດ້, ໃນໂມງລັດຖະການ.

**ຫົວໜ້າຫ້ອງການ**

ຫ້ອງການ

ອຸຕະແກ້ວ ແກ້ວດວງສົມ

ຕິດຕໍ່ພົວພັນ
ພະແນກບໍລິຫານ ແລະ ພິທີການ (ຫ້ອງການ ຜທ)
ໂທ: 021 216562, 020 2999 1160

สแกนด้วย CamScanner